ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 52 /ຫກ

ນະຄອນຫຼວງວຽງຈັນ,ວັນທີ: 20 ພະຈິກ 2017

ສຳນັກງານ ຄຄຊ
ຂາເຂົ້າ ເລກທີ 1287
ວັນທີ 21 NOV 2017
ໂທລະສັບ 021 217770

# ບົດລາຍງານ

## ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງສປປລາວ ປະຈຳອາທິດທີ 06-10/11/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ການເຄື່ອນໄຫວວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,02% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຈຳນວນປະຊາກອນທີ່ຂໍສະຫວັດດີການຕໍ່ເນື່ອງຂອງສະຫະລັດອາເມລິກາ ເພີ່ມຂຶ້ນເປັນ 1,90 ລ້ານຄົນ ຂອງອາທິດທີ 28/10/2017 ຈາກ 1,88 ລ້ານຄົນ ໃນອາທິດຜ່ານມາ; ພ້ອມກັນນັ້ນ, ດຸນການຄ້າຂອງສະຫະ ພາບເອີຣົບ ເກີນດຸນ 24,1 ຕື້ເອີໂຣ ຂອງເດືອນ 09/2017 ຈາກ 20,1 ຕື້ເອີໂຣໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 30/10-02/11/2017 | ອາທິດນີ້ 06-10/11/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1645 | 1,1647 | -0,02% |
| ເຢນ/ໂດລາ | 114,11 | 113,43 | 0,60% |
| ບາດ/ໂດລາ | 33,120 | 33,120 | 0,00% |
| ເປໂຊ/ໂດລາ | 51,16 | 51,24 | -0,16% |
| ຣູເປັຍ/ໂດລາ | 13.495 | 13,530 | -0,26% |
| ໂດລາສິງກະໂປ/ໂດລາ | 1,3614 | 1,3601 | 0,10% |
| ຢວນ/ໂດລາ | 6,6278 | 6,6366 | -0,13% |

1.2 ສະພາບລາຄານ້ຳມັນ ແລະຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 5,20% ຈາກ 54,81 ໂດລາ/ບາເຣວ ມາເປັນ 57,66 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນແອັດຊັງຂອງສະຫະລັດອາເມລິກາ ຫຼຸດລົງ 3,31 ລ້ານຄົນ ຂອງອາທິດທີ 03/11/2017 ຈາກຫຼຸດລົງ 4,02 ລ້ານບາເຣວ ໃນອາທິດຜ່ານມາ;

- ສໍາລັບລາຄາຄໍາ ເພີ່ມຂຶ້ນ 0,72% ຈາກ 1.275,01 ໂດລາ/ອອນ ມາເປັນ 1.284,20 ໂດລາ/ອອນ ເນື່ອງຈາກນັກລົງທຶນເຂົ້າຊື້ຄໍາ ແລະ ສັນຍາ ຊື້-ຂາຍຄໍາ ເພີ່ມຂຶ້ນ ເພື່ອປ້ອງກັນຄວາມສ່ຽງຈາກຄວາມຜັນຜວນຂອງຄ່າເງິນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,06% ແລະ ອ່ອນຄ່າລົງ 0,06% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 0,27% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 7,75% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 30/10-03/11/2017 | | | ອາທິດນີ້ 06-10/11/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.352,88 | 8.374,67 | 8.362,80 | 8.348,69 | 8.369,79 | 8.358,03 | 0,05% | 0,06% | 0,06% | -0,38% | -0,18% | -0,27% |
| ບາດ | 253,00 | 254,78 | 254,15 | 253,16 | 254,75 | 254,30 | -0,06% | 0,01% | -0,06% | -7,73% | -7,71% | -7,75% |

### 2.2 ສະພາບຖານເງິນຕາແລະປະລິມານເງິນM2

- ຖານເງິນຕາປະຈໍາອາທິດນີ້ ຫຼຸດລົງ 0,94% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,50%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,23% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,59%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈໍາອາທິດ (03-09/11/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 64,00 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 30,40 ລ້ານໂດລາ ແລະ ຂາຍໂດລາໄດ້ 33,60 ລ້ານໂດລາ) ແລະ ຊື້ເງິນບາດສຸດທິ 584,92 ລ້ານບາດ (ໃນນີ້ຊື້ບາດໄດ້ 129,11 ລ້ານບາດ ແລະ ຂາຍບາດໄດ້ 455,81 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາ ເພີ່ມຂຶ້ນ 12,46% ແຕ່ເງິນບາດ ຫຼຸດລົງ 26,64%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດຈໍານວນ 17,44 ລ້ານໂດລາ ແລະ ຂາຍເງິນບາດໃຫ້ທະນາຄານທຸລະກິດ ຈໍານວນ 5,00 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈໍານວນ 0,53 ລ້ານໂດລາສະຫະລັດ ແລະ ເງິນບາດ ຈໍານວນ 35,40 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆໃນອາທິດນີ້ ເຫັນວ່າບໍ່ມີການຊື້-ຂາຍ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນໍ້າໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 27/10-02/11/2017 | | ອາທິດນີ້ 03-09/11/2017 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **35,62** | **128,08** | **30,40** | **129,11** | **-14,65%** | **0,80%** |
| - ທ/ຄທຸລະກິດລັດ | 15,89 | 81,13 | 16,19 | 53,36 | 1,89% | -34,23% |
| - ທ/ຄທຸລະກິດອື່ນໆ | 19,73 | 46,95 | 14,21 | 75,75 | -27,98% | 61,34% |
| **2. ການຂາຍເງິນຕາຕ່າງປະເທດ** | **21,29** | **669,27** | **33,60** | **455,81** | **57,82%** | **-31,89%** |
| - ທ/ຄທຸລະກິດລັດ | 8,57 | 166,55 | 25,21 | 112,29 | 194,17% | -32,58% |
| - ທ/ຄທຸລະກິດອື່ນໆ | 12,72 | 502,72 | 8,39 | 343,52 | -34,04% | -31,67% |
| **ຊື້-ຂາຍສຸດທິທທກ** | **14,33** | **-541,19** | **-3,20** | **-326,70** | **-122,33%** | **-39,63%** |
| - ຜິດດ່ຽງຊື້-ຂາຍ | 40,23% | -422,54% | -10,53% | -253,04% | -126,17% | -40,11% |
| **- ມູນຄ່າການຊື້-ຂາຍ** | **56,91** | **797,35** | **64,00** | **584,92** | **12,46%** | **-26,64%** |
| **3.ການຊື້-ຂາຍລະຫວ່າງທຫລກັບ ທທກ** | **-8,04** | **-66,90** | **-17,44** | **-5,00** | | |
| - ທຫລຊື້ຈາກທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລຂາຍໃຫ້ທທກ | 8,04 | 66,90 | 17,44 | 5,00 | | |
| **4.ຊື້-ຂາຍລະຫວ່າງທທກດ້ວຍກັນ** | **0,60** | **34,88** | **0,53** | **35,40** | | |
| **5.ທຫລກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 11/2017 ຄາດວ່າຈະຢູ່ໃນລະດັບ 0,27% (ຕົວເລກຄາດຄະເນ).

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ເພີ່ມຂຶ້ນ 5,659% ທຽບໃສ່ອາທິດຜ່ານມາໂດຍມີຈຳນວນ 87,25 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 67,3% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 41,68 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງສປປລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 734 ສະບັບທຽບໃສ່ອາທິດຜ່ານມາ ຫຼຸດລົງ 363 ສະບັບ ເທົ່າກັບ 83% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 361,07 ຕື້ກີບທຽບໃສ່ອາທິດຜ່ານມາ ຫຼຸດລົງ 75,92 ຕື້ກີບ ເທົ່າກັບ 17% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ(02-09/11/2017)ມີທັງໝົດ 3.032 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.007 ຄັ້ງລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ 181,79 ຕື້ກີບຈາກ 848,83 ຕື້ກີບມາເປັນ 667,04 ຕື້ກີບເທົ່າກັບ 21,41%;
- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 25 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ 31 ຕື້ກີບ ຈາກ 36,42 ຕື້ກີບ ມາເປັນ 5,42 ຕື້ກີບເທົ່າກັບ 85,11%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 1.033,63 ຈຸດຫຼຸດລົງ 1,82% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 44.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 206,19 ລ້ານກີບ ຫຼຸດລົງ 77,71% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 26,43% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 30/10-03/11/2017 | ດັດຊະນີອາທິດທີ 06-10/11/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.052,75 | 1.033,63 | -1,82 | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ(LSX)</u> (ຫົວໜ່ວຍມູນຄ່າ 1.000ກີບ)

| ລາຍຊື່ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 109.400 | 581.670.000 | 5.317 | 14.000 | 69.755.000 | 4.983 | -87,20 | -88,01 | -334 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 66.300 | 330.545.000 | 4.986 | 25.300 | 126.450.000 | 4.998 | -61,84 | -61,74 | 12 |
| ບໍລິສັດລາວເວີນມະຫາຊົນ | 1.600 | 11.200.000 | 7.000 | - | - | 7.000 | -100,00 | -100,00 | - |
| ບໍລິສັດປີໂຕລຽມເທລດດິ້ງລາວມະຫາຊົນ | 100 | 230.000 | 2.300 | 300 | 670.000 | 2.233 | 200,00 | 191,30 | -67 |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | 100 | 295.000 | 2.950 | - | - | 2.950 | -100,00 | -100,00 | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | 500 | 925.000 | 1.850 | 5.100 | 9.320.000 | 1.827 | 920,00 | 907,57 | -22 |
| ທັງໝົດ | 178.000 | 924.865.000 | 5.196 | 44.700 | 206.195.000 | 4.613 | -74,89 | -77,71 | |

3. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

**ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** (1) ເຂົ້າຮ່ວມກອງປະຊຸມນາຍົກ-ຮອງນາຍົກ ທີ່ (ຫສນຍ); (2) ກອງປະຊຸມສະໄໝສາມັນເທື່ອທີ່ 4 ຂອງສະພາແຫ່ງຊາດ ຊຸດທີ່ VIII ທີ່ (ຫ້ອງວ່າການສູນກາງພັກ ຫຼັກ 6); (3) ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ອຳນວຍການ ທຫລ ປະຈຳ ເດືອນ ຕຸລາ; (4) ກອງປະຊຸມຄະນະສະເພາະກິດຕິດຕາມບໍລິສັດ ພີ ເອັສ; (5) ກອງປະຊຸມຄະນະເຮັດວຽກສະເພາະກິດກັບອິງການກວດກາລັດຖະບານ; (6) ກອງປະຊຸມປຶກສາຫາລືກ່ຽວກັບຄວາມເປັນເອກະພາບຂອງການປັບປຸງກົນໄກການຈັດເກັບຄ່າບິນຜ່ານ ທີ່ (ກະຊວງການເງິນ); (7) ກອງປະຊຸມສ່ອງແສງສາຍພັກ-ສາຍລັດ ປະຈຳເດືອນ ຕຸລາ; (8) ກອງປະຊຸມເຜີຍແຜ່ເນື້ອໃນຮ່າງຄຳແນະນຳວ່າດ້ວຍການລາຍງານການເຄື່ອນໄຫວດຳເນີນທຸລະກິດຂອງຜູ້ໃຫ້ບໍລິການໂອນເງິນ; (9) ກອງປະຊຸມຮ່ວມກັບບັນດາກົມ

ພາຍໃນ ທຫລ ເພື່ອປະກອບຄຳເຫັນໃສ່ (ຮ່າງ) ຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້ ແລະ ຮ່າງຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນ (ໃໝ່) ຂອງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ; (10) ກອງປະຊຸມປຶກສາຫາລືກ່ຽວກັບວຽກງານອວ່າຍໜີ້ 3 ແຈ (ທຫລ) ແລະ (11) ກອງປະຊຸມປຶກສາຫາລືພາຍໃນຄະນະຮັບຜິດຊອບຕິດຕາມການເກັບກຳເຄື່ອນໄຫວຮອບດ້ານຢູ່ທະນາຄານນະໂຍບາຍ (ທນບ) ໃນຂອບເຂດທົ່ວປະເທດ ທີ່ (ທຫລ).

- ສຳເລັດຕ້ອນຮັບການເຂົ້າຢ້ຽມຄະນະນຳ ທຫລ ຂອງປະທານກຳມະການທະນາຄານ Vietcombank;
- ສຳເລັດຕ້ອນຮັບການເຂົ້າຢ້ຽມຄະນະນຳ ທຫລ ຂອງທ່ານ Olivier KLEIN ຄະນະຜູ້ບໍລິຫານທະນາຄານ BRED Populaire ທະນາຄານລາວ-ຝຣັ່ງ;
- ສຳເລັດຕ້ອນຮັບການເຂົ້າຢ້ຽມຄະນະນຳ ທຫລ ຈາກບັນດາເອກອັກຄະລັດຖະທູດຂອງປະເທດສາມະຊິກສະຫະພາບເອີລົບ ປະຈຳ ສປປ ລາວ.

**<u>III. ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍແລະອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ.
- **ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ:** (1) ພິທີປິດກອງປະຊຸມສະພາແຫ່ງຊາດ; (2) ເຂົ້າຮ່ວມກອງປະຊຸມທີມງານເສດຖະກິດຂອງລັດຖະບານ ທີ່ (ຫສນຍ); (3) ກອງປະຊຸມປຶກສາຫາລືກ່ຽວກັບການປັບປຸງໂຄງສ້າງ ທພລ ແລະ ທສກ ທີ່ (ທຫລ); (4) ກອງປະຊຸມຄະນະຊີ້ນຳລວມຊຸກຍູ້ພັນທະບັດລັດຖະບານເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ; (5) ກອງປະຊຸມຄະນະປັບປຸງຮ່າງກົດໝາຍວ່າດ້ວຍລະບົບການຊຳລະ ທີ່ (ທຫລ); (6) ກອງປະຊຸມຄະນະປັບປຸງຮ່າງກົດໝາຍວ່າດ້ວຍ ທຫລ ພາຍໃນ ທຫລ ທີ່ (ທຫລ) ແລະ (7) ພິທີມອບຮັບປຶ້ມຄູ່ມືຄວາມຮູ້ພື້ນຖານຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.
- ລົງນາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືທາງດ້ານການເງິນ ເພື່ອສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນ ສປປ ລາວ ລະຫວ່າງ ທຫລ ກັບ ທະນາຄານພັດທະນາລາວແຫ່ງຊາດຈີນ;
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ແລະ ຮ່ວມປຶກສາຫາລືວຽກ ກັບ ບໍລິສັດ China Union Pay.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ພັດສະຖາພອນ ແກ້ວວົງວິຈິດ